ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ຳນັກງານ ຄຄຊ
ເລກທີ 12.10
ວັນທີ 02 NOV 2017
ະສັບ 021 217770

ເລກທີ: 49/ທກ

ນະຄອນຫຼວງວຽງຈັນ, ວັນທີ: 1 ພະຈິກ 2017

ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

ປະຈຳອາທິດ ທີ **16-20/10/2017** ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I.** ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II.** ການເຄື່ອນໄຫວວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

**1.1** ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,14% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາດີ ເປັນຕົ້ນແມ່ນຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດ ຫຼຸດລົງ 222.000 ຄົນ ຂອງອາທິດທີ 14/10/2017 ຈາກ 244.000 ຄົນ ໃນອາທິດຜ່ານມາ; ພ້ອມກັນນັ້ນ, ຕົວເລກຍອດຂາຍບ້ານປະຈຳ ເພີ່ມຂຶ້ນ 0,70% ຂອງເດືອນ 09/2017 ຈາກຫຼຸດລົງ 1,70% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ **09-13/10/2017** | ອາທິດນີ້ **16-20/10/2017** | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1827 | 1,1811 | 0,14% |
| ເຢນ/ໂດລາ | 112,10 | 113,36 | -1,11% |
| ບາດ/ໂດລາ | 33,07 | 33,17 | -0,30% |
| ເປໂຊ/ໂດລາ | 51,41 | 51,50 | -0,17% |
| ຣູເປັຍ/ໂດລາ | 13.496 | 13.517 | -0,16% |
| ໂດລາສິງກະໂປ/ໂດລາ | 1,3545 | 1,3596 | -0,38% |
| ຢວນ/ໂດລາ | 6,5856 | 6,6190 | -0,50% |

**1.2** ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 1,27% ຈາກ 51,38 ໂດລາ/ບາເຣວ ມາເປັນ 50,73 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນອັດຊັ່ງຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ 0,91 ລ້ານບາເຣວ ຂອງອາທິດທີ 13/10/2017 ຈາກເພີ່ມຂຶ້ນ 2,49 ລ້ານບາເຣວ;

- ສຳລັບລາຄາຄຳ ຫຼຸດລົງ 1,02% ຈາກ 1.293,82 ໂດລາ/ອອນ ມາເປັນ 1.280,68 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄຳ ແລະ ສັນຍາ ຊື້-ຂາຍ ຄຳເພື່ອເກງກຳໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ແຂງຄ່າຂຶ້ນ 0,06% ແຕ່ອ່ອນຄ່າລົງ 0,03% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 0,42% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7,65% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 10-13/10/2017 | | | ອາທິດນີ້ 16-20/10/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.365,91 | 8.389,57 | 8.375,36 | 8.357,29 | 8.382,28 | 8.370,45 | 0,10% | 0,09% | 0,06% | -0,49% | -0,33% | -0,42% |
| ບາດ | 253,05 | 254,58 | 253,95 | 252,84 | 254,67 | 254,02 | 0,08% | -0,03% | -0,03% | -7,61% | -7,68% | -7,65% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,10% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 13,60%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,22% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,82%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (13-19/10/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 6,70 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 31,79 ລ້ານໂດລາ ແລະ ຂາຍໂດລາໄດ້ 25,09 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 356,85 ລ້ານບາດ (ໃນນີ້ ຊື້ບາດໄດ້ 137,56 ລ້ານບາດ ແລະ ຂາຍບາດໄດ້ 494,41 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 43,13% ແລະ ເງິນບາດເພີ່ມຂຶ້ນ 9,48%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 10,14 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 87,70 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 2 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 63,13 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍເງິນໂດລາ ຈຳນວນ 0,59 ລ້ານໂດລາສະຫະລັດ ແຕ່ຊື້ເງິນບາດ ຈຳນວນ 2 ຕື້ບາດ.

---

1 % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 06-12/10/2017 | | ອາທິດນີ້ 13-19/10/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **20,70** | **138,90** | **31,79** | **137,56** | **53,57%** | **-0,96%** |
| - ທ/ຄທຸລະກິດລັດ | 6,50 | 93,27 | 8,08 | 50,60 | 24,31% | -45,75% |
| - ທ/ຄທຸລະກິດອື່ນໆ | 14,20 | 45,63 | 23,71 | 86,96 | 66,97% | 90,58% |
| **2. ການຂາຍເງິນຕາຕ່າງປະເທດ** | **19,04** | **438,36** | **25,09** | **494,41** | **31,78%** | **12,79%** |
| - ທ/ຄທຸລະກິດລັດ | 10,34 | 148,11 | 7,46 | 142,09 | -27,85% | -4,06% |
| - ທ/ຄທຸລະກິດອື່ນໆ | 8,70 | 290,25 | 17,63 | 352,32 | 102,64% | 21,39% |
| **ຊື້-ຂາຍສຸດທິ ທທກ** | **1,66** | **-299,46** | **6,70** | **-356,85** | **303,61%** | **19,16%** |
| - ຜົດດ່ຽງ ຊື້-ຂາຍ | 8,02% | -215,59% | 21,08% | -259,41% | 162,84% | 20,33% |
| - ມູນຄ່າການຊື້-ຂາຍ | 39,74 | 577,26 | 56,88 | 631,97 | **43,13%** | **9,48%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-9,25** | **-67,50** | **-10,14** | **-87,70** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 9,25 | 67,50 | 10,14 | 87,70 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **6,70** | **66,41** | **2,00** | **63,13** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,05** | **0,00** | **-0,59** | **2.000,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,05 | 0,00 | 0,02 | 2.000,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,61 | 0,00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 10/2017 ຄາດວ່າຈະຢູ່ໃນລະດັບຂອບ ຕ່ຳສຸດ -0,61% ຫາຂອບສູງສຸດ 1,04% (ຕົວເລກຄາດຄະເນ).

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ຫຼຸດລົງ 59,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 21,52 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 41,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 45,97 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1,007 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 583 ສະບັບ ເທົ່າກັບ 137,50% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 513,98 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 319,88 ຕື້ກີບ ເທົ່າກັບ 164,82% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (13-19/10/2017) ມີທັງໝົດ 3.317 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.295 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດ ນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ **ເພີ່ມຂຶ້ນ 383,34 ຕື້ກີບ** ຈາກ 480,36 ຕື້ກີບ ມາເປັນ 836,70 ຕື້ກີບ ເທົ່າກັບ 79,80%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 22 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 38,45 ຕື້ກີບ ຈາກ 40,89 ຕື້ກີບ ມາເປັນ 2,44 ຕື້ກີບ ເທົ່າກັບ 94,03%.

## 4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.031,31 ຈຸດ ຫຼຸດລົງ 2,16% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 173.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 707,36 ຕື້ກີບ ເພີ່ມຂຶ້ນ 8,20% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 69,57% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ **09-13/10/2017** | ດັດຊະນີອາທິດທີ **16-20/10/2017** | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.059,87 | 1.031,31 | -2,16 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 14.200 | 76.955.000 | 5.419 | 21.100 | 113.700.000 | 5.389 | 48,59 | 47,75 | -30,74 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 59.600 | 309.345.000 | 5.190 | 102.600 | 523.510.000 | 5.102 | 72,15 | 69,23 | -87,92 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.400 | - | - | 7.400 | - | - | - |
| ບໍລິສັດປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ | 100 | 195.000 | 1.950 | - | - | 1.950 | - 100,00 | - 100,00 | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງ ມະຫາຊົນ | 205.600 | 267.285.000 | 1.300 | 50.100 | 70.150.000 | 1.400 | - 75,63 | - 73,75 | 100,18 |
| ທັງໝົດ | 279.500 | 653.780.000 | 2.339 | 173.800 | 707.360.000 | 4.070 | - 37,82 | 8,20 | |

## 3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມເຜີຍແຜ່ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານການຕ້ານສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ທຫລ); ❷ ກອງປະຊຸມຄະນະສະເພາະກິດຂອງລັດຖະບານ ໃນການແກ້ໄຂບັນຫາຂອງບໍລິສັດພີເອັສ ສົ່ງເສີມກະສິກຳ ແລະ

ອຸດສາຫະກໍາຄືບວິງຈອນ ຂາອອກ-ຂາເຂົ້າ ໃນວັນທີ 16/10/2017 ທີ່ (ທຫລ); ❸ ກອງປະຊຸມທາບທາມເປີດກວ້າງ ກ່ຽວກັບຮ່າງດໍາລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ທາງການເງິນໃນນະຄອນຫຼວງວຽງຈັນ.

- ທ່ານ ຜູ້ວ່າການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການທີ່ (ແຂວງຊຽງຂວາງ ແລະ ແຂວງຫົວພັນ).

<u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ກະກຽມບັນດາເອກະສານຕ່າງໆເພື່ອຜ່ານກອງປະຊຸມສະພາບໍລິຫານ ທຫລ; ສືບຕໍ່ຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII (ຫ້ອງວ່າການສູນກາງພັກ ຫຼັກ 6); ສືບຕໍ່ກະກຽມລົງກວດກາທະນາຄານ ລາວ-ຝຣັ່ງ ຈໍາກັດ ແລະ ທະນາຄານກຸງເທບ ຈໍາກັດ ສາຂານະຄອນຫຼວງວຽງຈັນ ປະຈໍາປີ 2016 ຫາ ໄຕມາດ 2/2017.

- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈໍາເດືອນຕຸລາ 2017 (ຫສນຍ); ❷ ກອງປະຊຸມເຜີຍແຜ່ຂໍ້ຕົກລົງ ວ່າດ້ວຍການດັດແກ້ມາດຕາ 21 ຂອງຂໍ້ຕົກລົງວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ; ❸ ກອງປະຊຸມ ເຜີຍແຜ່ວຽກງານຕະຫຼາດທຶນ ທີ່ຈະຈັດຂຶ້ນໃນວັນທີ 2/11/2017, ຢູ່ທີ່ (ແຂວງ ສະຫວັນນະເຂດ); ❹ ກອງປະຊຸມປຶກສາຫາລືການຕອບແບບສອບຖາມສະພາບການບໍລິການທາງດ້ານການເງິນແບບດິຈິຕອນຂອງ ສປປ ລາວ; ❺ ເປັນປະທານພິທີເປີດຕົວລົດຕູ້ສໍາລັບວຽກປະຊາສຶກສາດ້ານການເງິນ (ຊັ້ນ 4 ທຫລ); ❻ ກອງປະຊຸມປຶກສາຫາລື ແລະ ຊອກຫາວິທີແກ້ໄຂຕາມຂໍ້ສະເໜີຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ຈະຈັດຂຶ້ນວັນທີ 25 ຕຸລາ 2017 ຢູ່ທີ່ (ສໍານັກງານ ຄຄຊ).

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍານັບຄະນະຜູ້ວ່າການຂອງຜູ້ແທນຈາກ ກະຊວງການເງິນ ສະຫະລັດອາເມລິກາທີ່ (ທຫລ);

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ